# ບົດຂ່າວພິທີລົງນາມ
# ສັນຍາການຮ່ວມມືໂຄງການບັດນັກສຶກສາ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ມະຫາວິທະຍາໄລແຫ່ງຊາດ

**ນະຄອນຫຼວງວຽງຈັນ, ວັນທີ: 30/05/2023**




ວັນທີ 30 ພຶດສະພາ 2023, ຢູ່ທີ່ ມະຫາວິທະຍາໄລ ແຫ່ງຊາດ ໄດ້ຈັດພິທີລົງນາມສັນຍາການຮ່ວມມືໂຄງການບັດນັກສຶກສາ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ມະຫາວິທະຍາໄລແຫ່ງຊາດ

ຕາງໜ້າລົງນາມໃນຄັ້ງນີ້ໂດຍ **ທ່ານ ນາງ ບົວໄພວັນ ນັນດາວົງ, ຮອງອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ແລະ **ທ່ານ ຣສ ປອ ອຸດົມ ພອນຄຳເພັງ ອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ,** ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ຄະນະຜູ້ບໍລິຫານທັງສອງຝ່າຍ, ຄູ-ອາຈານ, ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ໄລຍະຜ່ານມາ, ໂຄງການບັດນັກສຶກສາໄດ້ລິເລີ່ມຂຶ້ນມາໃຫ້ບໍລິການໃນຊ່ວງໄລຍະປີ 2013 ເປັນຕົ້ນມາ ເຊິ່ງຜະລິດຕະພັນດັ່ງກ່າວແມ່ນການພັດທະນາບັດນັກສຶກສາເປັນບັດດຽວກັບບັດເອທີເອັມ ເພື່ອນຳໃຊ້ໄວ້ຢັ້ງຢືນຕົວຕົນຂອງນັກສຶກສາ, ຢັ້ງຢືນການເຂົ້າຫ້ອງສອບເສັງ, ໃຊ້ໄວ້ຊຳລະຄ່າຮຽນ-ຄ່າທຳນຽມຕ່າງໆ ແລະ ສາມາດຖອນເງິນສົດໄດ້ທີ່ຕູ້ ATM. ເຊິ່ງການໃຫ້ບໍລິການດັ່ງກ່າວ ແມ່ນໄດ້ປະຕິບັດຮ່ວມກັບບັນດາສະຖາບັນການສຶກສາຕ່າງໆ ເປັນຕົ້ນແມ່ນ: ມະຫາວິທະຍາໄລແຫ່ງຊາດ, ສະຖາບັນການທະນາຄານ, ສະຖາບັນການເງິນ-ການບັນຊີ, ວິທະຍາໄລເຕັກນິກ ກະສິກຳດົງຄຳຊ້າງ, ວິທະຍາໄລ ຄູດົງຄຳຊ້າງ, ວິທະຍາໄລເຕັກນິກປາກປ່າສັກ, ວິທະຍາໄລເຕັກນິກ ລາວ-ເຢຍລະມັນ ແລະ ວິທະຍາໄລເຕັກນິກ ສັບພະວິຊາ ແລະ ໂຮງຮຽນວິຊາຊີບໃນຕ່າງແຂວງຈຳນວນໜຶ່ງ.

ອີງໃສ່ສະພາບໃນປະຈຸບັນ ກ່ຽວກັບການຊຳລະສະສາງ ແມ່ນມີບົດບາດທັນທິດໄປສູ່ລະບົບ ດີຈີຕອນ ທີ່ທັນສະໄໝ, ການແຂ່ງຂັນກັບເວລາ ແລະ ການເອື້ອອຳນວຍຄວາມສະດວກໃຫ້ແກ່ວຽກງານຮອບດ້ານ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ແນມເຫັນຄວາມສຳຄັນ ຂອດບໍລິການຊຳລະສະສາງໃຫ້ມີຄວາມຄ່ອງຕົວ ພ້ອມທັງແນ່ໃສ່ການຮ່ວມມືເຂົ້າ

ຊ່ວຍເຫລືອແກ່ທຸກພາກສ່ວນໃນສັງຄົມລາວ, ໂດຍສະເພາະບັນດາ ວິທະຍາໄລ, ມະຫາວິທະຍາໄລ ແລະ ສະຖາບັນການສຶກສາຕ່າງໆ, ເພື່ອຫັນການຊຳລະຄ່າລົງທະບຽນ, ຄ່າຮຽນ ແລະ ຄ່າທຳນຽມຕ່າງໆ ຂອງນັກສຶກສາ ຈາກການຊຳລະເປັນເງິນສົດ ໃຫ້ຫັນມານຳໃຊ້ບັດເອເລັກໂຕຼນິກ ໂດຍອອກເປັນບັດນັກສຶກສາ ທີ່ສາມາດນຳໃຊ້ເປັນບັດດຽວຄືກັນກັບບັດເອທີເອັມ ເພື່ອເປັນການປູກຈິດສຳນຶກໃຫ້ແກ່ນັກສຶກສາຮູ້ຈັກການອອມ ແລະ ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດຫັນມາໃຊ້ການຊຳລະ ແລະ ບໍລິການທາງເອເລັກໂຫຼນິກຫຼາຍຂຶ້ນ. ນອກຈາກນີ້, ຍັງສາມາດນຳໃຊ້ລະບົບເອເລັກໂຫຼນິກຂອງ ທຄຕລ ເຂົ້າໃນການຮັບໃຊ້ ການຊຳລະຄ່າຮຽນຂອງນັກສຶກສາ ແລະ ຕິດຕາມການຊຳລະຜ່ານລະບົບເອເລັກໂຫຼນິກຂອງ ທຄຕລ ເປັນຕົ້ນແມ່ນ: ເຄື່ອງຮູດບັດ EDC, BCEL One,  BCEL I-Bank,  BCEL OnePay ແລະ ຜະລິດຕະພັນອື່ນໆ.. ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຫັນກ້າວໄປສູ່ຄວາມທັນສະໄຫມ, ມີຄວາມປອດໄພ ແລະ ອຳນວຍຄວາມສະດວກແກ່ນັກສຶກສາໃນອະນາຄົດຕະຫລອດໄປ.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງມະຫາວິທະຍາໄລແຫ່ງຊາດ ທີ່ໄດ້ໃຫ້ຄວາມເຊື່ອໝັ້ນ ແລະ ເລືອກໃຊ້ບໍລິການຂອງ ທຄຕລ ໂດຍສະເພາະວຽກງານໂຄງການບັດນັກສຶກສາ, ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສືບຕໍ່ຮ່ວມມືກັບພາກສ່ວນອື່ນໆໂດຍຂະຫຍາຍທຸກຜະລິດຕະພັນຂອງ ທຄຕລ ແມ່ນເນັ້ນຄວາມທັນສະໄໝ, ສະດວກສະບາຍ, ມີຄວາມປອດໄພ ກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ໂດຍຄຳນຶງເຖິງຄວາມຕ້ອງການຂອງລູກຄ້າ ບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມ. ເພື່ອໃຫ້ລູກຄ້າ ແລະ ສັງຄົມໄດ້ຮັບຜົນປະໂຫຍດສູງສຸດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ

ຂຽນຂ່າວໂດຍ: ນາງ ສຸກພາວັນ ສີວົງໄຊ